

## ພະເຈົ້າຊົງເລີ້ມຕົ້ນສ້າງ ສວັນແລະແຜ່ນດິນ

ປະຖົມມະການ ໑:໑

# ການເລີ້ມຕົ້ນໃນການສ້າງທຸກສິ່ງຢ່າງ.

ກ່ອນການເລີ້ມຕົ້ນຂອງເວລາ, ບໍ່ມີຕົ້ນໄມ້, ບໍ່ມີພູເຂົາແລະບໍ່ມີທ້ອງຟ້າ, ມີແຕ່ພະເຈົ້າຢູ່ທີ່ນັ້ນ. ພະອົງໄດ້ບອກພວກເຮົາໃນສິ່ງທີ່ເກີດຂຶ້ນໄວ້ໃນປື້ມພະຄໍາພີຂອງພະອົງ.

ພະອົງໄດ້ສ້າງສະຫວັນແລະແຜ່ນດິນໂລກຂຶ້ນ. ໂດຍປັດສະຈາກວັດຖຸຕ່າງໆ. ແຕ່ວ່າແຜ່ນດິນໂລກນີ້ບໍ່ມີຮູບຮ່າງມັນເປັນສິ່ງເປົ່າຫວ່າງ. ພ້ອມດຽວກັບພະເຈົ້າໄດ້ເວົ້າວ່າ, "ຂໍໃຫ້ມີແສງສະຫວ່າງເກີດຂຶ້ນ." ແລະແສງສະຫວ່າງກໍ່ໄດ້ມີຂຶ້ນ. ທ່ານໄດ້ເຫັນວ່າພະເຈົ້າໄດ້ມີອໍານາດແລະໃຊ້ຄໍາເວົ້າອັນສັກສິດຂອງພະອົງສ້າງທຸກສິ່ງຢ່າງທີ່ເຮົາໄດ້ເຫັນຢູ່ໃນສະຫວັນແລະພື້ນແຜ່ນດິນໂລກນີ້.

ພະເຈົ້າໄດ້ສ້າງທຸກສິ່ງຢ່າງໃນຫົກວັນ, ຖືກແລ້ວ, ພະອົງບໍ່ໄດ້ໃຊ້ເວລາສ້າງເຖິງລ້ານປີ. ຄໍາສອນຂອງພະເຈົ້າແມ່ນພະຄໍາພີ, ເມື່ອພວກເຮົາໄດ້ອ່ານພະຄໍາພີແລ້ວມັນໄດ້ແຈ້ງໃນການສ້າງຫົກວັນນັ້ນ, ຄືມື້ແລງຜ່ານໄປ, ມື້ເຊົ້າຫາວັນເປັນມື້ທໍາອິດ. ມັນໄດ້ບອກໄວ້ອີກວ່າສໍາລັບມື້ທີສອງ, ມື້ທີສາມ, ຈົນຮອດມື້ທີຫົກ ແຕ່ລະມື້ພະເຈົ້າໄດ້ເວົ້າວ່າ, "ຂໍໃຫ້ມັນມີຂຶ້ນ" ແລະດ້ວຍຄໍາເວົ້າອັນສັກສິດຂອງພະອົງຈຶ່ງໄດ້ມີແສງສະຫວ່າງເກີດຂຶ້ນ, ທ້ອງຟ້າ, ຕາເວັນ, ເດືອນແລະດາວ, ແຜ່ນດິນ, ສັດລ້ຽງແລະສັດປ່າ, ຕົ້ນໄມ້ແລະພືດພັນຕ່າງໆ, ທະເລແລະແມ່ນໍ້າ, ປາແລະສັດຕ່າງໆ, ໄດ້ມີລາຍລະອຽດຢ່າງແນ່ນອນໃນທຸກສິ່ງທີ່ພະເຈົ້າໄດ້ສ້າງຂຶ້ນມາ.

ແຕ່ວ່າສິ່ງທີ່ສ້າງຂຶ້ນໃຫ້ເຫັນພິເສດສຸດໃນຫົກມື້ນັ້ນ, ແມ່ນມະນຸດຜູ້ຊາຍ, ແລະຜູ້ຍິງ, ຜູ້ຊາຍແລະຜູ້ຍິງມີເຫດຜົນພິເສດຫລາຍໆຢ່າງ. ອາດາມ, ເປັນມະນຸດຜູ້ຊາຍຜູ້ທໍາອິດ, ໄດ້ຖືກສ້າງຂຶ້ນມາຈາກຂີ້ດິນດ້ວຍພະເຈົ້າ. ແລະມະນຸດຜູ້ຍິງຜູ້ທໍາອິດ, ແມ່ນເອວາ, ສ້າງຂຶ້ນດ້ວຍພະເຈົ້າຈາກກະດູກຂ້າງຂອງອາດາມ. ເປັນຄວາມຈິງທີ່ພວກເຂົາໄດ້ຖືກສ້າງຂຶ້ນໂດຍພິເສດ.

ຜູ້ຊາຍມີຄວາມຫມາຍພິເສດແລະສໍາຄັນເພາະວ່າເຂົາຖືກສ້າງຂຶ້ນມາໃຫ້ຄືກັບພະເຈົ້າ. ແຕ່ບໍ່ຫມາຍຄວາມວ່າຜູ້ຊາຍຈະຄືກັບພະເຈົ້າ. ຜູ້ຊາຍບໍ່ສາມາດຄືກັບພະເຈົ້າໄດ້ເພາະວ່າພະເຈົ້າເປັນພຽງຈິດວິນຍານເທົ່ານັ້ນ. ພະເຈົ້າບໍ່ໄດ້ມີຮູບຮ່າງແລະກະດູກເຫມືອນມະນຸດຂອງເຮົາ. ການຖືກສ້າງຂຶ້ນມາໃຫ້ຄືກັບພະເຈົ້າຫມາຍຄວາມວ່າຜູ້ຊາຍນັ້ນໄດ້ຖືກສ້າງຂຶ້ນມາຢ່າງສົມບູນເຫມືອນພະເຈົ້າ. ປັດສະຈາກຄວາມຜິດບາບແລະຄວາມຮູ້ອັນສົມບູນຂອງພະເຈົ້າ. ຄວາມຈິງແລ້ວເມື່ອພະເຈົ້າໄດ້ສໍາເລັດໃນການສ້າງທຸກສິ່ງຢ່າງຂອງພະອົງແລ້ວ. ພະອົງໄດ້ກ່າວວ່າທຸກສິ່ງຢ່າງທັງຫມົດນີ້ເປັນທີ່ພໍພະໄທຂອງພະອົງແລະມີຄວາມສວຍງາມຫລາຍ.

ໃນການເພີ້ມເຕີມທາງດ້ານຮ່າງກາຍ, ພະເຈົ້າໄດ້ໃຫ້ມະນຸດຜູ້ຊາຍແລະຜູ້ຍິງມີຈິດວິນຍານ. ພຽງແຕ່ມະນຸດເທົ່ານັ້ນທີ່ພະເຈົ້າໄດ້ໃຫ້ທັງຮ່າງກາຍແລະຈິດວິນຍານ. ບໍ່ມີສິ່ງອື່ນໃດທີ່ເຫັນສ້າງຂື້ນມີຈິດວິນຍານ. ນອກຈາກສ້າງຂື້ນພິເສດແລະສ້າງໃຫ້ຄ້າຍຄືກັບພະເຈົ້າແລ້ວ. ມະນຸດຜູ້ຊາຍຍັງເປັນຜູ້ຄຸ້ມຄອງແຜ່ນດິນໂລກແລະທຸກສິ່ງຢ່າງທີ່ຢູ່ໃນໂລກນັ້ນ, ລາວໄດ້ຄຸ້ມຄອງປາຢູ່ໃນທະເລ, ນົກຢູ່ເທິງອາກາດ, ສັດລ້ຽງສັດປ່າແລະທຸກສິ່ງຢ່າງທີ່ມີການເຫນັງຕີງຢູ່ໃນໂລກນີ້. ນັ້ນເປັນໜ້າທີ່ຮັບຜິດຊອບອັນສຳຄັນທີ່ພະອົງໄດ້ມອບໃຫ້ແກ່ມະນຸດ.

ແຕ່ວ່າປັດຈຸບັນນີ້, ຍ້ອນຄວາມຜິດພາດມະນຸດບໍ່ໄດ້ຮັກສາໃນສິ່ງທີ່ພະເຈົ້າໄດ້ສ້າງຂື້ນມາໃຫ້ເໝືອນດັ່ງມັນໄດ້ເປັນມາ. ເຮົາໄດ້ທຳລາຍຄວາມສວຍງາມຂອງໂລກທີ່ພະເຈົ້າໄດ້ສ້າງຂື້ນມາ. ພວກເຮົາໄດ້ເຮັດໃຫ້ອາກາດມີຄວາມເປື້ອນດ້ວຍຄວອນແລະກິ່ນບໍ່ດີ. ພວກເຮົາໄດ້ເຮັດໃຫ້ແມ່ນ້ຳມີຄວາມເປື້ອນ, ພວກເຮົາໄດ້ຖິ້ມເສດຕ່າງໆໃສ່ຕາມຕົວເມືອງແລະນອກເມືອງ, ພວກເຮົາໄດ້ຂ້າສັດປ່າແລະຕັດຕົ້ນໄມ້ໂດຍປັດສາຈາກການປູກເພີ້ມ.

ພວກເຮົາບໍ່ໄດ້ຮັກສາສິ່ງທີ່ພະເຈົ້າໄດ້ສ້າງຂື້ນເໝືອນດັ່ງພວກເຮົາຄວນຈະປະຕິບັດ. ໂລກຂອງພວກເຮົາບໍ່ມີຄວາມສວຍງາມເໝືອນດັ່ງພະເຈົ້າໄດ້ສ້າງຂື້ນໄວ້ຄືເມື່ອກ່ອນອີກແລ້ວ. ພ້ອມດຽວກັນພວກເຮົາຍັງບໍ່ໄດ້ຮັບຜິດຊອບຮັກສາຮ່າງກາຍຂອງພວກເຮົາເລີຍ. ພວກເຮົາທຳລາຍຮ່າງກາຍຂອງພວກເຮົາເມື່ອເວລາເຮົາກິນສິ່ງບໍ່ດີ, ດື່ມເຫລົ້າຫລືສູບຢາ, ພວກເຮົາທຳລາຍຮ່າງກາຍຂອງພວກເຮົາເມື່ອເວລາພວກເຮົາໃຊ້ຢາເສບຕິດ.

ພວກເຮົາບໍ່ມີຄວາມສົມບູນເໝືອນດັ່ງພະເຈົ້າໄດ້ສ້າງເຮົາຂື້ນມາ. ແທນທີ່ຈະທຳລາຍຮ່າງກາຍຂອງເຮົາແລະໂລກນີ້. ພວກເຮົາຄວນຂອບພະຄູນຕໍ່ພະອົງ. ສຳລັບສຸກກະພາບແລະຮ່າງກາຍຂອງພວກເຮົາ. ພວກເຮົາຄວນຮັກສາຮ່າງກາຍຂອງພວກເຮົາໃຫ້ດີ. ພວກເຮົາຄວນສັນລະເສີນພະເຈົ້າເພາະວ່າພວກເຮົາໄດ້ຖືກສ້າງຂື້ນມາດ້ວຍຄວາມດີແລະຄວາມນັບຖືອັນສູງສົ່ງ. ບໍ່ມີສິ່ງໃດສາມາດມີແນວຄິດເໝືອນພວກເຮົາ, ບໍ່ມີສິ່ງໃດສາມາດໃຊ້ມືຂອງມັນເໝືອນພວກເຮົາໄດ້. ບໍ່ມີສິ່ງໃດມີຈິດວິນຍານເໝືອນພວກເຮົາອີກດ້ວຍ.

ຈິດວິນຍານນັ້ນແມ່ນຂອງຂວັນມາຈາກພະເຈົ້າ. ໂດຍຜ່ານທາງຄວາມເຊື່ອໃນພະເຢຊູຄຣິດເຈົ້າ. ພະບຸດຂອງພະເຈົ້າ, ຈິດວິນຍານຂອງເຮົາເພີ້ນັ້ນຈະຖືກກັບຄືນໄປຫາພະເຈົ້າຜູ້ທີ່ໄດ້ໃຫ້ເຮົາມາ. ຂໍໃຫ້ພວກເຮົາຈົ່ງໃຊ້ສຽງຮ້ອງຂອງພວກເຮົາໃນການສັນລະເສີນພະເຈົ້າໂດຍເວົ້າວ່າ, "ໂອຂໍຂອບພະຄຸນຕໍ່ພະອົງສຳລັບຄຸນງາມຄວາມດີຂອງພະອົງ."

ສຳລັບການຮຽນຕໍ່ໄປໃຫ້ອ່ານບົດປະຖົມມະການ.
ບົດທີໜຶ່ງແລະບົດທີສອງໃນປຶ້ມພະຄຳພີຂອງທ່ານ.





ຄວາມຜິດບາບໄດ້ເຂົ້າ
ມາໃນໂລກໂດຍຜ່ານມະ
ນຸດຜູ້ຊຽງແລະຄວາມ
ຕາຍກໍ່ໄດ້ເກີດຂຶ້ນ
ຍ້ອນຄວາມບາບນັ້ນ
ໂຣມ ໕:໑໔

# ຄຳສັນຍາໄດ້ເກີດຂຶ້ນ.

ເມື່ອພະເຈົ້າໄດ້ສ້າງມະນຸດຜູ້ຊາຍແລະຜູ້ຍິງ. ພະອົງໄດ້ໃຫ້ໜ້າທີ່ອັນສຳຄັນໃນຊີວິດຂອງເຂົາ. ຄືຜົວເປັນຫົວໜ້າເປັນຜູ້ນຳຂອງຄອບຄົວ. ເມັຍເປັນຜູ້ຊ່ວຍ, ແຕ່ວ່າອາດາມໄດ້ຖືກນຳໄປສູ່ຄວາມບາບໂດຍເອວາຜູ້ຖືກຫລອກລວງໂດຍຜີມານ. ສິ່ງບໍ່ດີໄດ້ຕົກລົງບົນແຜ່ນດິນໂລກແລະມະນຸດກໍ່ໄດ້ເປັນຜູ້ລັບຜົນຕາມມາ. ຂໍໃຫ້ພວກເຮົາຮຽນວິທີກ່ຽວກັບທຸກສິ່ງຢ່າງທີ່ເກີດຂຶ້ນມານີ້.

ຫລັງຈາກພະເຈົ້າໄດ້ສ້າງໂລກແລ້ວ. ພະອົງໄດ້ເອົາພໍ່ແມ່ຜູ້ທຳອິດຂອງພວກເຮົາໄວ້ໃນສວນອັນສວຍງາມແຫ່ງນຶ່ງ. ມັນເປັນທີ່ຮູ້ກັນວ່າສວນເມືອງເອເດນ ມັນເປັນສະຖານທີ່ສວຍງາມທີ່ສຸດ, ຕົ້ນໄມ້ທຸກຊະນິດງາມແກ່ສາຍຕາແລະເປັນບ່ອນອຸດົມສົມບູນສຳລັບປູກພືດຕ່າງໆ. ມີແມ່ນ້ຳໄຫລຜ່ານສວນນັ້ນ, ໂດຍໃຫ້ນ້ຳແກ່ມະນຸດ, ແກ່ສັດແລະພືດຕ່າງໆ. ອາດາມແລະເອວາໄດ້ມີຄວາມສຸກ, ວຽກງານບໍ່ມີຄວາມລຳບາກ, ແຕ່ວ່າມີຄວາມເບີກບານ.

ເຖິງຢ່າງໃດກໍ່ຕາມ, ພະເຈົ້າໄດ້ໃຫ້ຂໍ້ບັນຍັດຂໍ້ນຶ່ງແກ່ອາດາມ. ພະອົງໄດ້ບອກລາວວ່າບໍ່ໃຫ້ລາວກິນໝາກໄມ້ຈາກຕົ້ນໄມ້ທີ່ພະອົງຫວງຫ້າມທີ່ຢູ່ໃນກາງສວນນັ້ນ. ພະເຈົ້າໄດ້ເວົ້າວ່າອາດາມຕ້ອງຕາຍແນ່ນອນຖ້າລາວກິນໝາກໄມ້ດັ່ງກ່າວນັ້ນ. ເທວະດາຜູ້ມີຄວາມຜິດບາບ, ເອີ້ນວ່າຊາຕານ, ໄດ້ເຂົ້າມາເປັນສິ່ງແວດລ້ອມແລະລໍ້ລວງ. ຊາຕານໄດ້ຖາມເອວາ, ມັນໄດ້ເຮັດໃຫ້ລາວເກີດຄວາມສົງໃສຕໍ່ຄຳສັນຍາຂອງພະເຈົ້າ. ມັນຍັງໄດ້ຕົວະອີກດ້ວຍ, ຊາຕານໄດ້ລໍ້ລວງລາວໂດຍເວົ້າວ່າ, "ແນ່ນອນເຈົ້າຈະບໍ່ຕາຍເດັດຂາດ, ພະເຈົ້າຮູ້ວ່າເມື່ອເຈົ້າກິນໝາກໄມ້ນີ້ແລ້ວ, ເຈົ້າຈະເປັນເໝືອນດັ່ງພະເຈົ້າ."

ດີແລ້ວ, ເອວາໄດ້ເຫັນວ່າໝາກໄມ້ຢູ່ເທິງຕົ້ນນັ້ນຈະກິນແຊບດີ. ດັ່ງນັ້ນລາວຈຶ່ງໄດ້ກິນ, ແລ້ວລາວໄດ້ເອົາໝາກໄມ້ນັ້ນໃຫ້ອາດາມ, ແລະອາດາມກໍ່ໄດ້ກິນ. ພວກເຂົາບໍ່ໄດ້ເຊື່ອຟັງຕໍ່ຄຳສັນຍາອັນງາຍໆຂອງພະເຈົ້າເລີຍ. ພວກເຂົາໄດ້ມີຄວາມບາບ, ພວກເຂົາໄດ້ນຳເອົາຄວາມສາບແຊ່ງຂອງພະເຈົ້າມາສູ່ຕົວຂອງເຂົາແລະຕໍ່ໂລກທີ່ເຂົາອາໄສຢູ່ນັ້ນ. ຈິດວິນຍານແລະຮ່າງກາຍຂອງເຂົາກໍ່ໄດ້ຕາຍແລະສະຫລາຍຕົວລົງທັນທີ.

ຄວາມຜິດບາບກໍ່ໄດ້ຕົກເຂົ້າສູ່ອາດາມແລະເອວາຢ່າງຈະແຈ້ງແລະກໍ່ໄດ້ຢູ່ນຳພວກເຮົາແຕ່ລະຄົນໃນປັດຈຸບັນນີ້. ພວກເຮົາບໍ່ໄດ້ຄືພະເຈົ້າອີກແລ້ວ, ພວກເຮົາຄວນທີ່ຈະບໍ່ມີບາບແຕ່ວ່າພວກເຮົາບາບໜັກ. ພວກເຮົາບໍ່ໄດ້ມີຄວາມສົມບູນເໝືອນພະເຈົ້າອີກແລ້ວ. ພະເຈົ້າໄດ້ຮູ້ເຖິງສິ່ງທີ່ເກີດຂຶ້ນ, ພະອົງໄດ້ເອົາອາດາມແລະເອວາອອກຈາກສວນເພື່ອເປັນການລົງໂທດ. ພະອົງໄດ້ບອກອາດາມວ່າຕໍ່ນີ້ໄປລາວຕ້ອງໄດ້ອອກແຮງງານຢ່າງໜັກ.

ຊີວິດກໍ່ຈະໄດ້ຮັບແຕ່ຄວາມເຈັບປວດ, ແລະມັນແມ່ນທຸກວັນນີ້, ບໍ່ແມ່ນບໍ່? ສ້ຽນໜາມແລະສິ່ງທີ່ມີໜາມຈະເກີດຂຶ້ນໃນສວນຂອງອາດາມ. ແລະມັນແມ່ນທຸກມື້ນີ້, ບໍ່ແມ່ນບໍ່? ພະອົງໄດ້ກ່າວຕໍ່ອາດາມວ່າຮ່າງກາຍຂອງລາວຕ້ອງກາຍເປັນຂີ້ຝຸ່ນຊຶ່ງເປັນສິ່ງທີ່ເຮັດຂຶ້ນມາ. ແລະຮ່າງກາຍຂອງພວກເຮົາກໍ່ຈະເປັນເຊັ່ນດຽວກັນເມື່ອເວລາພວກເຮົາຕາຍລົງໄປ, ບໍ່ແມ່ນບໍ່.?

ພະເຈົ້າໄດ້ບອກເອວາວ່າລາວຈະໄດ້ຮັບຄວາມເຈັບປວດທີ່ສຸດເມື່ອເວລາລາວອອກລູກ. ແລະມັນເປັນເຊັ່ນນັ້ນ, ບໍ່ແມ່ນບໍ່.? ພະອົງໄດ້ບອກລາວວ່າຜົວຂອງລາວຈະເປັນຜູ້ຄົ້ມຄອງຕໍ່ລາວ. ແລະມັນກໍ່ເປັນເໝືອນດັ່ງທຸກວັນນີ້.

ແຕ່ວ່າພະເຈົ້າບໍ່ໄດ້ເປັນພຽງແຕ່ຜູ້ຊື່ສັດແລະຍຸດຕິທັມ. ພະອົງຍັງເປັນຜູ້ມີຄວາມເມດຕາແລະໃຫ້ອະໄພອີກດ້ວຍ. ພະອົງໄດ້ໃຫ້ຄຳສັນຍາອັນໜຶ່ງແກ່ອາດາມແລະເອວາແລະພວກເຮົາໝົດທຸກຄົນ. ພະອົງຍັງໄດ້ສັນຍາວ່າຈະສົ່ງຜູ້ຊ່ວຍໃຫ້ພົ້ນມາໃຫ້ພວກເຮົາ. ພະອົງໄດ້ເວົ້າວ່າຜູ້ຊ່ວຍໃຫ້ພົ້ນນັ້ນຈະກຳຈັດທຳລາຍຫົວໜ້າຕົວມານທີ່ມີອຳນາດນັ້ນໃຫ້ພວກເຮົາ.

ເຖິງຢ່າງໃດກໍ່ຕາມໃນຄຳສອນໄດ້ບອກໄວ້ວ່າ, ພະຜູ້ຊ່ວຍໃຫ້ພົ້ນຈະໄດ້ຮັບຄວາມເຈັບປວດ. ພະຜູ້ຊ່ວຍໃຫ້ພົ້ນນັ້ນໄດ້ສັນຍາແຕ່ດົນຜ່ານມາວ່າ. ບໍ່ມີໃຜນອກຈາກພະເຢຊູຄຣິດເຈົ້າ. ພະບຸດຂອງພະອົງ, ໂດຍການທໍຣະມານຄວາມຕາຍ ແລະການທີ່ຄືນມາຈາກຄວາມຕາຍນັ້ນ. ພະອົງໄດ້ເຮັດໃຫ້ມະນຸດພົ້ນຈາກຄວາມຜິດບາບ. ແລະບໍ່ກົວຕໍ່ຄວາມຕາຍ, ແລະອຳນາດຂອງຜີມານນັ້ນ.

ພວກເຮົາຕ້ອງການຜູ້ຊ່ວຍໃຫ້ພົ້ນບາບ, ເມື່ອພວກເຮົາເກີດມາໃນໂລກນີ້. ພວກເຮົາເປັນມະນຸດທີ່ມີຄວາມຜິດບາບ. ພວກເຮົາໄດ້ຮັບຄວາມບາບມາຈາກພໍ່ແມ່ຜູ້ທຳອິດຂອງພວກເຮົາຄືອາດາມແລະເອວາ. ໃນຊີວິດປະວັນຂອງພວກເຮົາ. ພວກເຮົາໄດ້ກະທຳບາບຫລາຍໆຢ່າງ. ພວກເຮົາບໍ່ປະຕິບັດຕາມຄຳສັ່ງຂອງພະເຈົ້າ ພວກເຮົາເປັນບາບ, ເມື່ອພວກເຮົາເວົ້າຕົວະ, ຂີ້ລັກ, ປຸ້ນດ່າ, ມີແນວຄິດບໍ່ດີ. ເຮັດໃຫ້ເພື່ອນບ້ານມີຄວາມເຈັບປວດ. ແລະເຮັດສິ່ງອື່ນໆສຳຄັນກວ່າພະເຈົ້າ. ພວກເຮົາເປັນຄົນບາບ, ພວກເຮົາມີແນວຄິດອັນຜິດບາບ, ພວກເຮົາເວົ້າຄວາມບາບ, ພວກເຮົາໄດ້ກະທຳຄວາມຜິດບາບ,

ສະລຸບແລ້ວພວກເຮົາສົມຄວນແກ່ຄວາມຕາຍແລະຕົກລົງໄປໃນນາຣົກ. ຄວາມອົບອຸ່ນແລະກຳລັງໃຈຂອງພວກເຮົາຄືເຮົາໄດ້ຮູ້ວ່າພະເຈົ້າໄດ້ໃຫ້ຄຳສັນຍາວ່າຈະສົ່ງຜູ້ຊ່ວຍພົ້ນບາບມາໃຫ້ພວກເຮົາ. ພວກເຮົາມາຮຽນຮູ້ກ່ຽວກັບຜູ້ຊ່ວຍໃຫ້ພົ້ນບາບນັ້ນຈາກປຶ້ມພະຄຳພີ.

ການຮຽນເພີ້ມເຕີມກ່ຽວກັບຄວາມຜິດບາບທີ່ຕົກເຂົ້າສູ່ມະນຸດຜູ້ຊາຍນັ້ນໃຫ້ທ່ານອ່ານປະຖົມການບົດທີສາມໃນປຶ້ມພະຄຳພີຂອງທ່ານ.

ເຮົາຈະເອົາຄວາມກຽດຊັງໃຫ້ຣະຫວ່າງເຈົ້າກັບຜູ້ຍິງແລະຣະຫວ່າງລູກຂອງເຈົ້າແລະຂອງລາວ

ປະຖົມມະການ ໓:໑໕

